**ບົດແປເປັນພາສາລາວ:**

**ມາດຕາ 1 :** ກົດໝາຍນີ້ເອີ້ນວ່າ " ກົດໝາຍການອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າຂ້າມຊາຍແດນ ພ.ສ 2556 "

**ມາດຕາ 2 :** ກົດໝາຍສະບັບນີ້ ມີຜົນບັງຄັບໃຊ້ນັບຕັ້ງແຕ່ມື້ລົງນາມເປັນຕົ້ນໄປ.

**ມາດຕາ 3 :** ກົດໝາຍສະບັບນີ້ :

" ການຂົນສົ່ງຂ້າມຊາຍແດນ " ມີຄວາມໝາຍວ່າ ການນຳເຂົ້າມາໃນ ຫຼື ການສົ່ງອອກໄປນອກ ຫຼື ການນຳຜ່ານຂ້າມປະເທດ ຕົວຢ່າງ : ສັດ,ພືດ ຫຼື ສິນຄ້າອື່ນໆ.ຜ່ານດ່ານຊາຍແດນຕາມກົດໝາຍວ່າດ້ວຍພາສີ ຫຼື ການເດີນທາງເຂົ້າໃນ ຫຼື ອອກໄປນອກປະເທດຂອງບຸກຄົນ, ພາຫະນະ, ເຈົ້າຂອງພາຫະນະ ແລະ ຄົນຂັບພາຫະນະຕາມດານກວດຄົນເຂົ້າເມືອງ ຫຼື ຊາຍແດນຕ່າງໆ ຕາມກົດໝາຍວ່າດ້ວຍຄົນເຂົ້າເມືອງ ລະຫ່ວາງປະເທດກັບຕ່າງປະເທດ.

" ຂໍ້ຕົກລົງ " ໝາຍຄວາມວ່າ : ຂໍ້ຕົກລົງ ລະຫວ່າງ ລັດຖະບານໄທ ກັບ ລັດຖະບານຕ່າງປະເທດກ່ຽວກັບການອຳນວຍຄວາມສະດວກໃນການຂົນສົ່ງຂ້າມຊາຍແດນ.

" ວິທີການ " ໝາຍຄວາມວ່າ : ການດຳເນີນງານຂອງເຈົ້າໜ້າທີ່ໃນພື້ນທີ່ຄວບຄຸມຮ່ວມກັນ ຕາມກົດໝາຍທີ່ກ່ຽວຂ້ອງກັບການນຳເຂົ້າ ສົ່ງອອກ ການນຳຜ່ານ, ການຄວບຄຸມ, ການກວດ ແລະ ການອານຸຍາດການເຂົ້າ.

" ພື້ນທີ່ຄວບຄຸມຮ່ວມກັນ " ໝາຍຄວາມວ່າ : ພື້ນທີ່ຄວບຄຸມຮ່ວມກັນໃນປະເທດ ແລະ ພື້ນທີ່ຄວບຄຸມຮ່ວມກັນນອກປະເທດ.

" ພື້ນທີ່ຄວບຄຸມຮ່ວມກັນໃນປະເທດ " ໝາຍຄວາມວ່າ: ພື້ນທີ່ໃນປະເທດທີ່ລັດຖະບານໄທກຳນົດໃຫ້ເປັນພື້ນທີ່ສຳລັບດຳເນີນງານຮ່ວມກັນຂອງເຈົ້າໜ້າທີ່.

" ພື້ນທີ່ຄວບຄຸມຮ່ວມກັນນອກປະເທດ " ໝາຍຄວາມວ່າ :ພື້ນທີ່ນອກປະເທດທີ່ລັດຖະບານຂອງປະເທດ ພາຄີ ຕາມຂໍ້ຕົກລົງກຳນົດໃຫ້ເປັນພື້ນທີ່ສຳລັບດຳເນີນງານຮ່ວມກັນຂອງເຈົ້າໜ້າທີ່.

" ໜ່ວຍງານທີ່ກ່ຽວຂ້ອງ " ໝາຍຄວາມວ່າ: ໜ່ວຍງານຂອງລັດຖະບານໄທມີອຳນາດໜ້າທີ່ໃນການດຳເນີນວິທີການໃນທີ່ຄວບຄຸມຮ່ວມກັນ.

"ເຈົ້າໜ້າທີ່ " ໝາຍຄວາມວ່າ : ເຈົ້າໜ້າທີ່ຂອງລັດຖະບານໄທມີອຳນາດໜ້າທີ່ໃນການດຳເນີນວິທີການ ແລະ ເຈົ້າໜ້າທີ່ຂອງລັດຖະບານປະເທດ ພາຄີ ຕາມຂໍ້ຕົກລົງທີ່ເຂົ້າມາດຳເນີນງານໃນພື້ນທີ່ຄວບຄຸມຮ່ວມກັນ.

"ລັດຖະມົນຕີ " ໝາຍຄວາມວ່າ : ລັດຖະມົນຕີຜູ້ຮັກສາການຕາມກົດໝາຍນີ້.

**ມາດຕາ 4 :** ເພື່ອຜົນປະໂຫຍດໃນການອໍານວຍຄວາມສະດວກໃນການຂົນສົ່ງຂ້າມຊາຍແດນຕາມຂໍ້ຕົກລົງ. ໃຫ້ລັດຖະມົນຕີວ່າການກະຊວງຄົມມະນາຄົມ ແລະ ຂົນສົ່ງ. ໂດຍໃຫ້ມີຄໍາຄິດຄໍາເຫັນຂອງຄະນະລັດຖະມົນຕີມີອໍານາດປະກາດກໍານົດໃຫ້ພື້ນທີ່ໃນຂົງເຂດ ພາສີ , ສະຖານີ, ທ່າເຮືອ ຫຼື ພື້ນທີ່ໃດໜຶ່ງທີ່ເໝາະສົມສໍາລັບການດໍາເນີນງານ ເປັນພື້ນທີ່ຄວບຄຸມຮ່ວມກັນໃນປະເທດ.

ກໍານົດພື້ນທີ່ຄວບຄຸມຮ່ວມກັນໃນປະເທດ ແລະ ລັດຖະບານຂອງປະເທດພາຄີຕາມຂໍ້ຕົກລົງໄດ້ແຈ້ງພື້ນທີ່ໃຫ້ເປັນພື້ນທີ່ຄວບຄຸມຮ່ວມກັນນອກປະເທດໄທ້ລັດຖະບານໄທຮັບຮູ້ແລ້ວໃຫ້ໜ່ວຍງານທີ່ກ່ຽວຂ້ອງດໍາເນີນການເພື່ອໃຫ້ສາມາດດໍາເນີນງານໃຫ້ເປັນລະບຽບໃນພື້ນທີ່ຄວບຄຸມຮ່ວມກັນ.

**ມາດຕາ 5 :** ການດໍາເນີນງານຂອງເຈົ້າໜ້າທີ່ຂອງລັດຖະບານໄທໃນພື້ນທີ່ຄວບຄຸມຮ່ວມກັນນອກປະເທດໃຫ້ຖືວ່າເປັນການດໍາເນີນງານໃນປະເທດ.

**ມາດຕາ 6 :** ເຈົ້າໜ້າທີ່ຂອງລັດຖະບານປະເທດພາຄີ ຕາມຂໍ້ຕົກລົງສາມາດດໍາເນີນງານຕາມກົດໝາຍຂອງປະເທດພາຄີ ໃນພື້ນທີ່ຄວບຄຸມຮ່ວມກັນໃນປະເທດໄດ້. ໂດຍຂົງເຂດອໍານາດໜ້າທີ່ໃນການດໍາເນີນວິທີການຂອງເຈົ້າໜ້າທີ່ຕ້ອງເປັນໄປຕາມຂໍ້ຕົກລົງຂອງລັດຖະບານໄທ.

ໃຫ້ເຈົ້າໜ້າທີ່ຂອງລັດຖະບານປະເທດພາຄີ ຕາມຂໍ້ຕົກລົງໄດ້ຮັບຍົກເວັ້ນບໍ່ຕ້ອງປະຕິບັດຕາມກົດໝາຍ ຄົນເຂົ້າເມືອງ. ຕາມຫຼັກເກນ ວິທີການແລະເງື່ອນໄຂທີ່ ລັດຖະຕີວ່າການກະຊວງພາຍໃນກໍານົດ.

**ມາດຕາ 7 :** ໃນການປະຕິບັດໜ້າທີ່ໃນພື້ນທີ່ຄວບຄຸມຮ່ວມກັນ ເຈົ້າໜ້າທີ່ຂອງລັດຖະບານຂອງປະເທດພາຄີ ຕາມຂໍ້ຕົກລົງຕ້ອງສະແດງບັດປະຈໍາໂຕ ຊຶ່ງອອກໂດຍ ລັດຖະບານຂອງປະເທດ ພາຄີ ຕາມຂໍ້ຕົກລົງນັ້ນ ກັບບຸກຄົນທີ່ກ່ຽວຂ້ອງ.

**ມາດຕາ 8 :** ໃຫ້ເຈົ້າໜ້າທີ່ຂອງລັດຖະບານປະເທດ ພາຄີ ຕາມຂໍ້ຕົກລົງດໍາເນີນງານໃນພື້ນທີ່ຄວບຄຸມຮ່ວມກັນໃນປະເທດເປັນພະນັກງານຕິດຕາມກົດໝາຍອາຍາ.

**ມາດຕາ 9 :** ການເຮັດຄວາມຜິດກ່ຽວກັບການຂົນສົ່ງຂ້າມຊາຍແດນໃນພື້ນທີ່ຄວບຄຸມຮ່ວມກັນນອກ ປະເທດ ແລະ ເປັນຄວາມຜິດຕາມກົດໝາຍໄທ ໃຫ້ຖືວ່າເປັນການເຮັດຄວາມຜິດໃນປະເທດ.

**ມາດຕາ 10 :** ການດໍາເນີນງານໃນກໍລະນີມີການເຮັດຜິດກ່ຽວກັບການຂົນສົ່ງຂ້າມຊາຍແດນທີ່ເຈົ້າໜ້າທີ່ກວດເຫັນໃນພື້ນທີ່ຄວບຄຸມຮ່ວມກັນໃນປະເທດ ໃຫ້ເປັນໄປຕາມຫຼັກເກນ ແລະ ວິທີການຄື :

- ໃນກໍລະນີທີ່ເປັນການເຮັດຜິດຕາມກົດໝາຍໄທ ໃຫ້ເຈົ້າໜ້າທີ່ຂອງລັດຖະບານໄທດໍາເນີນການຕາມກົດໝາຍຕໍ່ໄປ.
- ໃນກໍລະນີເປັນການເຮັດຜິດຕາມກົດໝາຍຂອງປະເທດ ພາຄີ ຕາມຂໍ້ຕົກລົງແລະເຈົ້າໜ້າທີ່ຂອງລັດຖະບານປະເທດພາຄີ ຕາມຂໍ້ຕົກລົງຮ້ອງຂໍ. ໃຫ້ເຈົ້າໜ້າທີ່ຂອງລັດຖະບານໄທສົ່ງບຸກຄົນ, ສັດ,ພືດ,ພາຫະນະ ແລະ ຄົນຂັບພາຫະນະທີ່ໃຊ້ຂົນສົ່ງສິນຄ້າດັ່ງກ່າວກັບມາຍັງປະເທດ ພາຄີຕາມຂໍ້ຕົກລົງ.

- ໃນກໍລະນີທີ່ເປັນການເຮັດຜິດຕາມກົດໝາຍໄທ ແລະ ກົດໝາຍປະເທດພາຄີ ຕາມຂໍ້ຕົກລົງແລະ ຖ້າເຈົ້າໜ້າທີ່ຂອງລັດຖະບານປະເທດພາຄີ ຕາມຂໍ້ຕົກລົງຮ້ອງຂໍ ເຈົ້າໜ້າທີ່ຂອງລັດຖະບານໄທຈະສົ່ງບຸກຄົນ , ສັດ , ພືດ , ພາຫະນະ ແລະ ຄົນຂັບພາຫະນະທີ່ໃຊ້ຂົນສົ່ງສິນຄ້າດັ່ງກ່າວກັບມາຍັງປະເທດ ພາຄີ ຕາມຂໍ້ຕົກລົງ.

**ມາດຕາ 11 :** ການດໍາເນີນການໃນກໍລະນີມີການເຮັດຜິດຕາມກົດໝາຍໄທ ທີ່ກ່ຽວກັບການຂົນສົ່ງຂ້າມຊາຍແດນທີ່ເຈົ້າໜ້າທີ່ກວດເຫັນໃນພື້ນທີ່ຄວບຄຸມຮ່ວມກັນນອກປະເທດ. ໃຫ້ເຈົ້າໜ້າທີ່ຂອງລັດຖະບານໄທຮ້ອງຂໍຕໍ່ເຈົ້າໜ້າທີ່ຂອງລັດຖະບານປະເທດພາຄີ ຕາມຂໍ້ຕົກລົງໃຫ້ສົ່ງບຸກຄົນ ,ສັດ,ພືດ,ພາຫະນະ ແລະ ຄົນຂັບພາຫະນະ ທີ່ໃຊ້ຂົນສົ່ງສິນຄ້າດັ່ງກ່າວກັບມາປະເທດ ເພື່ອດໍາເນີນຕາມກົດໝາຍໄທຕໍ່ໄປ.

ການດໍາເນີນງານໃນກໍລະນີທີ່ມີການເຮັດຄວາມຜິດຕາມກົດໝາຍໄທ ແລະ ກົດໝາຍປະເທດພາຄີ ຕາມຂໍ້ຕົກລົງທີ່ກ່ຽວກັບການຂົນສົ່ງຂ້າມຊາຍແດນທີ່ເຈົ້າໜ້າທີ່ກວດເຫັນໃນພື້ນທີ່ຄວບຄຸມຮ່ວມກັນນອກປະເທດເຈົ້າໜ້າທີ່ຂອງລັດຖະບານໄທຂໍຮ້ອງເຈົ້າໜ້າທີ່ຂອງລັດຖະບານປະເທດພາຄີ ຕາມຂໍ້ຕົກລົງໃຫ້ບຸກຄົນ, ສັດ, ພືດ ,ພາຫະນະ , ເຈົ້າຂອງພາຫະນະ ແລະ ຄົນຂັບພາຫະນະທີ່ໃຊ້ຂົນສົ່ງສິນຄ້າດັ່ງກ່າວ ກັບມາປະເທດເພື່ອດໍາເນີນການກົດໝາຍໄທ.

**ມາດຕາ 12 :** ໃຫ້ລັດຖະມົນຕີອອກລະບຽບເພື່ອກໍານົດວິທີປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ຂອງ ລັດຖະບານໄທໃນພື້ນທີ່ຄວບຄຸມຮ່ວມກັນ ໃນເລື່ອງ :

- ປະຕິບັດໜ້າທີ່ຮ່ວມກັນໃນລະຫ່ວາງໜ່ວຍງານທີ່ກ່ຽວຂອ້ງເພື່ອປະຕິບັດຕາມກົດໝາຍ.
- ການນໍາລະບົບການເຮັດວຽກ, ເຄື່ອງມື ແລະ ອຸປະກອນທີ່ເປັນມາດຕະຖານສາກົນມາໃຊ້ໃນການແລກປ່ຽນຂໍ້ມູນເພື່ອການດໍາເນີນງານຂະບວນການລະຫວ່າງໜ່ວຍງານທີ່ກ່ຽວຂ້ອງ.
- ການສົ່ງບຸກຄົນ , ສັດ , ພືດ ,ພາຫະນະ ແລະຄົນຂັບຂີ່ພາຫະນະທີ່ໃຊ້ຂົນສົ່ງສິ່ງດັ່ງກ່າວແລະການລາຍງານຜົນການດໍາເນີນງານ ຕາມມາດຕາ 10.
- ການຮ້ອງຂໍໃຫ້ສົ່ງບຸກຄົນ , ສັດ ,ພືດ ,ພາຫະນະ ແລະ ຜູ້ຂັບຂີ່ພາຫະນະທີ່ໃຊ້ຂົນສົ່ງສິ່ງດັ່ງກ່າວ ຕາມມາດຕາ 11 .
- ການດໍາເນີນການອື່ນໆ ໃນພື້ນທີ່ຄວບຄຸມຮ່ວມກັນ.

**ມາດຕາ 13 :** ໃຫ້ລັດຖະມົນຕີວ່າການກະຊວງການເງິນ, ລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ລັດຖະມົນຕີກະຊວງຄົມມະນາຄົມ, ລັດຖະມົນຕີກະຊວງຊັບພະຍາກອນທໍາມະຊາດແລະ ສິ່ງແວດລອ້ມ, ລັດຖະມົນຕີກະຊວງພາຍໃນ ແລະ ລັດຖະມົນຕີກະຊວງສາທາລະນະສຸກ ຮັກສາການຕາມກົດໝາຍນີ້ ແລະ ໃຫ້ມີອໍານາດຕາມລະບຽບເພື່ອປະຕິບັດຕາມກົດໝາຍນີ້.

ໝາຍເຫດ : ເຫດຜົນໃນການປະກາດໃຊ້ກົດໝາຍສະບັບນີ້ແມ່ນຍ້ອນ ການຂົນສົ່ງຂ້າມຊາຍແດນລະຫວ່າງປະເທດໄທກັບປະເທດເພື່ອນບ້ານ ມີຄວາມສໍາຄັນຕໍ່ລະບົບການຄ້າລະຫວ່າງປະເທດ ແລະ ການພັດທະນາເສດຖະກິດ ແລະສັງຄົມຂອງປະເທດຫຼາຍຍິ່ງຂຶ້ນ. ຕະຫຼອດຈົນມີການເຮັດຂໍ້ຕົກລົງລະຫວ່າງປະເທດກ່ຽວກັບການອໍານວຍຄວາມ

ສະດວກໃນການຂົນສົ່ງຂ້າມຊາຍແດນຊຶ່ງໄດ້ມີການຮ່ວມມືໃນການໃຫ້ເຈົ້າໜ້າທີ່ສາມາດດຳເນີນງານຮ່ວມກັນໃນພື້ນທີ່ດຽວກັນ. ດັ່ງນັ້ນ ເພື່ອເປັນການສົ່ງເສີມການຄ້າລະຫວ່າງປະເທດແລະເປັນການປະຕິບັດລະບຽບການດັ່ງກ່າວ ເໝາະສົມກຳນົດໃຫ້ມີພື້ນທີ່ສຳລັບດຳງານຮ່ວມກັນ ແລະ ກຳນົດຫຼັກການກາງສຳລັບເຈົ້າໜ້າທີ່ຂອງລັດຖະບານໄທ ແລະ ເຈົ້າໜ້າທີ່ຂອງລັດຖະບານປະເທດ ພາຄີ ຕາມຂໍ້ຕົກລົງເພື່ອດຳເນີນງານໃນພື້ນທີ່ດັ່ງກ່າວ.

<u>ແຫລ່ງຂໍ້ມູນ:</u>

http://www.ratchakitcha.soc.go.th/DATA/PDF/2556/A/030/1.PDF